ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເລກທີ 01 ສປປ

ລົງວັນທີ 12/1/2001

# ລັດຖະບັນຍັດ

# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ວ່າດ້ວຍ ຄ່າທຳນຽມໃຊ້ນ້ຳມັນ

-------------

- ອີງຕາມລັດຖະທຳມະນູນ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ V ມາດຕາ 53, ຂໍ້ 2.
- ອີງຕາມກົດໝາຍທາງຫລວງ ສະບັບເລກທີ 04/99/ສພຊ. ລົງວັນທີ 3/4/1999;
- ອີງຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 02 /ຄປຈ , ລົງ ວັນທີ 10 ມັງກອນ 2001 .

ປະທານປະເທດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະບັນຍັດ

### ພາກທີ I

### ຫລັກການລວມ

<u>ມາດຕາ 1</u>: ຄ່າທຳນຽມໃຊ້ນ້ຳມັນແມ່ນຄ່າຊັກເພີ່ມຈາກລາຄານ້ຳມັນກາຊວນ ແລະ ນ້ຳມັນແອັດຊັງ ນອກຈາກພາສີຂາເຂົ້າ, ອາກອນການຂາຍ, ອາກອນຊົມໃຊ້ ແລະ ຄ່າຊັກທົ່ວໄປອື່ນໆ ຈາກນ້ຳມັນກາຊວນ ແລະ ນ້ຳມັນແອັດຊັງ.

<u>ມາດຕາ 2</u>: ຜູ້ຊົມໃຊ້ທາງຫລວງ ລ້ວນແຕ່ມີພັນທະປະກອບສ່ວນເຂົ້າໃນການບູລະນະຮັກສາທາງຫຼວງ ເພື່ອໃຫ້ສາມາດນຳໃຊ້ໄດ້ຍາວນານ, ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ - ສັງຄົມແຫ່ງຊາດ ດ້ວຍການເສຍຄ່າທຳນຽມໃຊ້ນ້ຳມັນ ຊຶ່ງເປັນແຫລ່ງລາຍຮັບໜຶ່ງຂອງ

ລາຍຮັບແຫ່ງຊາດ ໂດຍທາງອອ້ມຈາກຜູ້ຊົມໃຊ້ທາງຫລວງ. ຄ່າທຳນຽມໃຊ້ນ້ຳມັນຈະຖືກນຳໃຊ້ສະເພາະເຂົ້າໃນກອງທຶນບູລະນະຮັກສາທາງຫລວງ.

## ພາກທີ II
## ອັດຕາຄ່າທຳນຽມ

ມາດຕາ 3: ຄ່າທຳນຽມໃຊ້ນ້ຳມັນ ແມ່ນ ໄດ້ກຳນົດເປັນເອກະພາບກັນ ສຳລັບນ້ຳມັນກາຊວນ ແລະ ນ້ຳມັນແອັດຊັງ ດ້ວຍອັດຕາ 40 ກີບຕໍ່ລິດ.

ຄ່າທຳນຽມໃຊ້ນ້ຳມັນ ຈະຖືກພິຈາລະນາເພີ່ມຂຶ້ນໃນແຕ່ລະປີ ຢ່າງເໝາະສົມ ເພື່ອຮັບປະກັນການສະສົມທຶນ ໃຫ້ແກ່ກອງທຶນ ໃນການຈັດຕັ້ງປະຕິບັດແຜນງານບູລະນະຮັກສາທາງຫລວງ.

## ພາກທີ III
## ການຈັດຕັ້ງປະຕິບັດ

ມາດຕາ 4: ມອບໃຫ້ລັດຖະບານ ແຫ່ງ ສປປ ລາວ ເປັນຜູ້ອອກຂໍ້ກຳນົດລະອຽດ ເພື່ອຈັດຕັ້ງປະຕິບັດລັດຖະບັນຍັດສະບັບນີ້ ໃຫ້ໄດ້ຮັບຜົນເປັນຢ່າງດີ.

ມາດຕາ 5: ລັດຖະບັນຍັດສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.
ຂໍ້ກຳນົດ, ລະບຽບໃດໆ ທີ່ຂັດກັບລັດຖະບັນຍັດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ປະທານປະເທດ ແຫ່ງ ສປປ ລາວ

ຄຳໄຕ ສີພັນດອນ